
ALL-NEW ISUZU
MU-X
ຜູ້ນຳແຫ່ງຄວາມສຳເລັດ...ທີ່ເໜືອກວ່າໃຜ
Isuzu Laos ອີຊູຊຸລາວ

## ALL-NEW ISUZU MU-X

# ຜູ້ນຳແຫ່ງຄວາມສຳເລັດ...ທີ່ເໜືອກວ່າໃຜ

**ALL-NEW ISUZU MU-X** ສຸດຍອດລົດປະເພດຊັ້ນນຳ ສະທ້ອນລົດສະນິຍົມຫຼູຫຼາ ລະດັບມາສເຕີພີຊ ດ້ວຍການອອກແບບທີ່ໂດດເດັ່ນຕັ້ງແຕ່ຄັ້ງທຳອິດທີ່ໄດ້ສຳຜັດ ພ້ອມຄວາມຫຼູຫຼາສະດວກສະບາຍ ຕະຫຼອດຈົນຮອດເຕັກໂນໂລຊີເພື່ອຄວາມປອດໄພຄົບຊຸດ ແລະ ສະມັດຖະນະການຂັບຂີ່ ໃຫ້ທ່ານໝັ້ນໃຈໃນທຸກເສັ້ນທາງ



# ຜູ້ນຳແຫ່ງຄວາມໂດດເດັ່ນ...ທີ່ເໜືອກວ່າໃຜ

ສູ່ອີກລະດັບ ດ້ວຍການອອກແບບທີ່ປະສານຄວາມໜັກແໜ້ນ ແລະ ພິວໄຫວເຂົ້າໄວ້ດ້ວຍກັນທັງໂຕລົດຢ່າງລົງໂຕ ບົ່ງບອກຄວາມເປັນທ່ານທີ່ແຕກຕ່າງ ແລະ ໂດດເດັ່ນແຕ່ຄັ້ງທຳອິດທີ່ໄດ້ສຳຜັດ

- ກະຈັງໜ້າແບບ World Cross Flow ປະສົມປະສານພື້ນຜິວສຳຜັດວັດສະດຸພຣີມ້ຽມທີ່ງົດງາມ ແລະ ແຕກຕ່າງໄດ້ຢ່າງລົງໂຕ • ໄຟໜ້າ Bi-LED Projector ອອກແບບ Arrow Signature ຫຼູຫຼາ ແບບໄດນາມິກ ພ້ອມໄຟຕັດໝອກແບບ LED
- ໄຟທ້າຍ LED ອອກແບບ Winglet Signature ເພີ່ມມິຕິມຸມມອງໃຫ້ໂດດເດັ່ນດ້ວຍໂຄມໄຟ 3-Line LED • ລໍ້ອັນລອຍໄດນາມິກອອກແບບ ຄົມເຂັ້ມ ດຸດັນ ຂະໜາດ 20 ນີ້ວ ແລະ 18 ນີ້ວ



# ຜູ້ນຳແຫ່ງຄວາມຫຼູ...ທີ່ເໜືອກວ່າໃຜ

ສະທ້ອນລົດສະນິຍົມຫຼູເໜືອລະດັບມາສເຕີພີຊ ສູ່ອີກຂັ້ນແຫ່ງການອອກແບບພາຍໃນ

- ຫ້ອງໂດຍສານກວ້າງຂວາງ ຫຼູຫຼາດ້ວຍແນວຄິດການອອກແບບ Fine, Rich & Impressive Craftsmanship • ຄອນໂຊນໜ້າເຊື່ອມຕໍ່ເປັນໜຶ່ງດຽວກັບຄອນໂຊນກາງ ພ້ອມເບຣກມືໄຟຟ້າ ແລະ ລະບົບ Auto Brake Hold ລະບົບຊ່ວຍຢຸດລົດຢູ່ກັບທີ່ໂດຍບໍ່ຕ້ອງຢຽບເບຣກຄ້າງໄວ້ ແລະ ປົດເບຣກອັດຕະໂນມັດເມື່ອແຕະຄັນເລັ່ງ • Ambient Light ແລະ Dome Light ສ້າງບັນຍາກາດຫຼູມີລະດັບພາຍໃນຫ້ອງໂດຍສານ • ພວງມະໄລເມົາຕີຟັງຊັ່ນ ພ້ອມ Sequential Paddle Shift ປ່ຽນເກຍໄດ້ພຽງປາຍນິ້ວມື • ເບາະນັ່ງອອກແບບຫຼູສີ Saddle Brown ຕັດຫຍິບດ້ວຍວັດສະດຸພິເສດ ໂອບກະຊັບ

## ຜູ້ນຳແຫ່ງຄວາມສະດວກສະບາຍ...ທີ່ເໜືອກວ່າໃຜ

ສຸດລ້ຳ ພ້ອມເຕີມເຕັມສຸນທະລີຍະພາບແຫ່ງການເດີນທາງ ໃຫ້ສົມບູນແບບ ໃນທຸກຊ່ວງເວລາ ດ້ວຍເຕັກໂນໂລຊີອຳນວຍຄວາມສະດວກຄົບຊຸດ





- ເບາະນັ່ງສາມແຖວ ອອກແບບໃຫ້ນັ່ງສະບາຍທັງ 7 ບ່ອນນັ່ງ ພ້ອມປັບພັບໄດ້ຫຼາກຫຼາຍຮູບແບບຕາມການໃຊ້ງານ
- ເບາະປັບໄຟຟ້າ ດ້ານຄົນຂັບປັບໄດ້ 8 ທິດທາງ
- ລະບົບຄວາມບັນເທີງ ISUZU Ultimate Entertainment ໜ້າຈໍ Infotainment Display ຂະໜາດໃຫຍ່ 9 ນິ້ວ ຮອງຮັບ Apple CarPlay ແລະ Android Auto ພ້ອມລຳໂພງ 8 ຈຸດ ໃຫ້ມິຕິສຽງຮອບທິດທາງ
- ລະບົບປັບອາກາດອັດຕະໂນມັດແບບ Dual Zone ແຍກອິດສະຫຼະຊ້າຍ-ຂວາ
- Charging Station ຮອງຮັບການໃຊ້ງານອຸປະກອນໄຟຟ້າຫຼາກຫຼາຍທັງ USB Fast Charger ຊ່ອງຕໍ່ AC Power Socket 220V ແລະ ຊ່ອງຕໍ່ DC 12V
- Power Tailgate ລະບົບເປີດ-ປິດປະຕູທ້າຍດ້ວຍໄຟຟ້າ ພ້ອມລະບົບ Jam Protection
- ISUZU Genius Entry ສະຕ໊າດເຄື່ອງຈັກດ້ວຍ Remote Engine Start ແລະໃຊ້ເປີດ-ປິດປະຕູທ້າຍໄຟຟ້າ

* ສະເພາະມືຖືລຸ້ນທີ່ຮອງຮັບການໃຊ້ງານ



REMOTE ENGINE START

POWER TAILGATE

CHARGING STATION

## ຜູ້ນຳແຫ່ງສະມັດຖະນະ..... ທີ່ເໜືອກວ່າໃຜ

ຕອບໂຈດການຂັບຂີ່ທີ່ທ້າທາຍໃຈທ່ານ ກັບເຕັກໂນໂລຊີແຫ່ງຂຸມພະລັງອັນເປັນເອກະລັກຈາກອີຊູຊຸ ທີ່ພ້ອມມອບຈັງຫວະການຂັບຂີ່ທີ່ສະບາຍ ຕື່ນເຕັ້ນ ແຕ່ໜັກແໜ້ນໝັ້ນຄົງ ໃຫ້ທ່ານໝັ້ນໃຈໃນທຸກເສັ້ນທາງ



3.0 Ddi Blue Power



### ISUZU Ddi Blue Power

- **ເຄື່ອງຈັກ 3.0 Ddi Blue Power**
  ກຳລັງສູງສຸດ 190 ແຮງມ້າ ແຮງບິດສູງສຸດ 450 ນິວຕັນ-ແມັດ

**ສະດວກສະບາຍ ດ້ວຍລະບົບເກຍອັດຕະໂນມັດ**

- **ເກຍອັດຕະໂນມັດ 6 ສະປີດ ພ້ອມໂໝດ Rev Tronic ແລະ Sequential Paddle Shift** ຖ່າຍທອດຈັງຫວະປ່ຽນເກຍໄດ້ໄວ ແລະ ຄ່ອງແຄ່ວ
- **ລະບົບ Terrain Command** (ສະເພາະລຸ້ນ 4x4) ສະວິດປ່ຽນການຂັບເຄື່ອນຈາກ 2 ລໍ້ ເປັນ 4 ລໍ້ ເລືອກການໃຊ້ງານໄດ້ເໝາະກັບທຸກສະພາບຖະໜົນໄດ້ທັງ 2H, 4H ແລະ 4L ພ້ອມລະບົບ Rough Terrain Mode ຊ່ວຍຄວບຄຸມການເຮັດວຽກຂອງເຄື່ອງຈັກ ແລະ ເບຣກໃຫ້ເໝາະສົມ ເພື່ອສາມາດຜ່ານອຸປະສັກໄດ້ດີຂຶ້ນ ເຮັດວຽກໄດ້ທັງ 2H, 4H ແລະ 4L

### ISUZU Symmetric Mobility

- ໂຄງສ້າງໂຕຖັງເສີມເຫຼັກ Ultra-High Tensile ແຂງແກ່ນໝັ້ນໃຈສຸດ • ການວາງຕຳແໜ່ງເຄື່ອງຈັກຢູ່ທາງຫຼັງຂອງເພົາດ້ານໜ້າແບບ Semi-Midship ກະຈາຍນ້ຳໜັກ ຍຶດຕິດຖະໜົນຊົງໂຕດີຂຶ້ນ • ຊ່ວງລ່າງຄອຍສະປິງທັງ 4 ລໍ້ • ຊ່ວງລ່າງດ້ານໜ້າແບບອິດສະຫຼະ ປີກນົກ 2 ຊັ້ນ Double Wishbone ແລະ ເຫຼັກກັນໂຄງ • ຊ່ວງລ່າງດ້ານຫຼັງແບບ 5-Link Suspension ພ້ອມເຫຼັກກັນໂຄງນຸ້ມນວນ ເກາະຖະໜົນດີຍິ່ງຂຶ້ນ

**THE POTENTIAL OF PRIDE**

ພິສູດແຫ່ງຄວາມເປັນ**ຜູ້ນຳ...ທີ່ເໜືອກວ່າໃຜ**



